# THURSTON COUNTY SUPERIOR COURT

*Liang, et al. v. State of Washington Dep't of Social & Health Services (DSHS), et al.*

**ຖ້າຫາກວ່າທ່ານເປັນຫລືເຄີຍເປັນຜູ້ບໍລິການສ່ວນບຸກຄົນ (Individual Provider (IP)) ຜູ້ທີ່ໄດ້ເອົາການເບິ່ງແຍງດູແລ ໃຫ້ແກ່ລູກຄ້າຜູ້ທີ່ມີຊົ່ວໂມງເບິ່ງແຍງດູແລທີ່ຖືກຈ່າຍເງິນໃຫ້ຂອງເຂົາເຈົ້າໄດ້ຖືກລຸດລົງໂດຍກົມ DSHS ຍ້ອນກົດລະບຽບ "ສະວັດດີການຮ່ວມກັນ", ທ່ານສາມາດໄດ້ຮັບການຈ່າຍເງິນຈາກການຕົກລົງແກ້ໄຂຄະດີຟ້ອງສານເປັນກຸ່ມ.**

*ສານໄດ້ອະນຸຍາດໃບແຈ້ງການໃບນີ້.ອັນນີ້ບໍ່ແມ່ນການໂຄສະນາຊັກຊວນຈາກທະນາຍຄວາມ.*

ການຕົກລົງແກ້ໄຂຄະດີຈະເອົາເງິນໃຫ້ $116 ລ້ານດອນລາເພື່ອຈະຈ່າຍຄ່າທວງເງິນໂດຍຜູ້ບໍລິການສ່ວນບຸກຄົນ (Individual Providers (IPs) ຜູ້ທີ່ໄດ້ເອົາການເບິ່ງແຍງດູແລສ່ວນບຸກຄົນໃຫ້ແກ່ລູກຄ້າຜູ້ທີ່ມີຊົ່ວໂມງເບິ່ງແຍງດູແລທີ່ຖືກຈ່າຍເງິນໃຫ້ຂອງເຂົາເຈົ້າໄດ້ຖືກລຸດລົງໂດຍກົມ DSHS ຍ້ອນກົດລະບຽບ "ສະວັດດີການຮ່ວມກັນ" ຂອງກົມ DSHS ໃນລະຫວ່າງເດືອນມາກຊ໌ 7, 2014, ແລະເດືອນເຟບຣູຣີ 28, 2021.

ການຕົກລົງແກ້ໄຂຄະດີຈະແກ້ໄຂການຟ້ອງຄະດີຂຶ້ນສານກ່ຽວກັບບໍ່ວ່າຈະແມ່ນເຣື່ອງ IPs ໄດ້ຖືກປະຕິເສດໃນເງິນຈ່າຍທົດແທນເຕັມຕົວສໍາລັບຊົ່ວໂມງທີ່ຖືກເຮັດວຽກຍ້ອນກົດລະບຽບສະວັດດີການຮ່ວມກັນ; ຈ່າຍເງິນໃຫ້ IPs; ຫລີກເວັ້ນການສ່ຽງຈາກການດໍາເນີນຄະດີການຟ້ອງຂຶ້ນສານຕໍ່ໄປ;ຈ່າຍເງິນໃຫ້ IPs ຄືກັນກັບທ່ານ; ແລະປົດປ່ອຍກົມ DSHS ແລະຈໍາເລີຍຄົນອື່ນໆຈາກຄວາມຮັບຜິດຊອບ.

ສິດທິຕາມກົດໝາຍຂອງທ່ານໄດ້ຖືກກະທົບກະເທືອນເຖິງບໍ່ກ່ຽວວ່າທ່ານຈະປະຕິບັດການແນວໃດກໍຕາມ.ຈົ່ງອ່ານໃບແຈ້ງການໃບນີ້ຢ່າງລະມັດລະວັງ. ຣາຍລະອຽດເພີ້ມເຕີມຈະມີໄວ້ໃຫ້ຢູ່ທີ່ www.IPWageSettlement.com.

**ສິດທິຕາມກົດໝາຍຂອງທ່ານແລະທາງເລືອກເອົາຢູ່ໃນການຕົກລົງແກ້ໄຂຄະດີອັນນີ້**

| | |
|---|---|
| **ບໍ່ຕ້ອງເຮັດແນວໃດໝົດແລະ,ຖ້າຫາກວ່າທ່ານໄດ້ຮັບເຊັກເງິນ,ໄປແລກເອົາເງິນສົດ** | **ຢູ່ໃນການຟ້ອງຂຶ້ນສານອັນນີ້. ສະລະສິດທິບາງຢ່າງ.**<br>ໂດຍການບໍ່ເຮັດຫຍັງໝົດ,ທ່ານຈະຢູ່ໃນການຟ້ອງສານເປັນກຸ່ມ.ຖ້າຫາກວ່າການຕົກລົງແກ້ໄຂຄະດີໄດ້ຖືກອະນຸມັດແລະທ່ານໄດ້ສ່ວນນຶ່ງຂອງມັນ,ທ່ານຈະໄດ້ຮັບເຊັກເງິນ.ຈົ່ງເບິ່ງພາກສ່ວນ 9-13. ຖ້າຫາກວ່າທ່ານແລກເອົາເງິນສົດຫລືຝາກເຊັກເງິນເຂົ້າ,ທ່ານຖືກພິສູດວ່າທ່ານໄດ້ເຮັດວຽກໃຫ້ລູກຄ້າຜູ້ທີ່ສະທ້ອນເຖິງ,ໄດ້ເອົາການເບິ່ງແຍງດູແລບາງຢ່າງໃຫ້ລູກຄ້າ,ແລະບໍ່ຖືກຈ່າຍເງິນໃຫ້ສໍາລັບການບໍລິການເຫລົ່ານີ້.ຫລັກຖານພິສູດອັນນີ້ໄດ້ຖືກກ່າວຢ່າງລະອຽດຢູ່ໃນ Section 13 ຂ້າງລຸ່ມນີ້.ຖ້າຫາກວ່າທ່ານບໍ່ແລກເຊັກເອົາເງິນສົດ,ເງິນຈໍານວນນັ້ນຈະຖືກແຈກຢາຍໃຫມ່ໃຫ້ IPs ຄົນອື່ນໆແຕ່ວ່າທ່ານຍັງຈະສະລະສິດຂອງທ່ານທີ່ຈະຟ້ອງຂຶ້ນສານໃສ່ກົມ DSHS ສໍາລັບການທວງເງິນທີ່ຖືກຄຸ້ມກັນໂດຍການຕົກລົງແກ້ໄຂຄະດີ. |
| **ຍົກເວັ້ນຕົວທ່ານເອງອອກໄປ** | **ອອກຈາກການຟ້ອງຂຶ້ນສານອັນນີ້. ຈະບໍ່ໄດ້ສະວັດດີການແນວໃດຈາກການຟ້ອງຂຶ້ນສານ.ຮັກສາສິດທິເອົາໄວ້.**<br>ຖ້າຫາກວ່າທ່ານຍົກເວັ້ນຕົວທ່ານເອງອອກໄປຫລື "ເລືອກອອກໄປ" ຈາກການຕົກລົງແກ້ໄຂຄະດີອັນນີ້,ທ່ານຈະບໍ່ໄດ້ຮັບການຈ່າຍເງິນຂອງການຕົກລົງແກ້ໄຂຄະດີ.ແຕ່ວ່າ,ທ່ານຈະເກັບຮັກສາສິດທິຕ່າງໆທີ່ທ່ານອາດຈະມີຢູ່ໄວ້ເພື່ອຈະຕິດຕາມການທວງເງິນຕໍ່ໄປໃສ່ກົມ DSHS ຕ່າງຫາກອີກ.ເພື່ອຈະເລືອກອອກໄປ,ທ່ານຕ້ອງດໍາເນີນການກ່ອນ ເດືອນຈຸນລາຍ 22, 2022. |
| **ຄັດຄ້ານ** | **ບອກສານຖ້າຫາກວ່າທ່ານບໍ່ມັກການຕົກລົງແກ້ໄຂຄະດີ.**<br>ຖ້າຫາກວ່າທ່ານບໍ່ພໍໃຈນໍາເງື່ອນໄຂຂອງການຕົກລົງແກ້ໄຂຄະດີທີ່ຖືກວາງອອກມາ,ທ່ານຈະຍື່ນໜັງສືຄັດຄ້ານນໍາສານແລະ/ຫລືມາປາກົດຕົວຢູ່ສານເພື່ອຈະອະທິບາຍການຄັດຄ້ານຂອງທ່ານ.ທ່ານບໍ່ສາມາດເຮັດໄດ້ທັງສອງຢ່າງການເລືອກອອກໄປແລະ/ຫລືການຄັດຄ້ານການຕົກລົງແກ້ໄຂຄະດີ. |

- ສິດທິແລະທາງເລືອກເອົາຂອງທ່ານ — ແລະເສັ້ນກໍານົດເວລາຕາຍໂຕເພື່ອຈະໃຊ້ມັນ — ໄດ້ຖືກອະທິບາຍຢູ່ໃນໃບແຈ້ງການໃບນີ້.
- ສານຍັງຈະຕ້ອງໄດ້ຕັດສິນວ່າຈະອະນຸມັດການຕົກລົງແກ້ໄຂຄະດີຫລືບໍ່.ການຈ່າຍເງິນຈະຖືກຈ່າຍອອກໄປຖ້າຫາກວ່າສານອະນຸມັດການຕົກລົງແກ້ໄຂຄະດີແລະຫລັງຈາກທີ່ການອຸທອນຕ່າງໆໄດ້ຖືກແກ້ໄຂແລ້ວ.ກະຣຸນາອົດໃຈໄວ້.

**تتوفر نسخة من هذا الإشعار باللغة العربية على الموقع الإلكتروني www.IPWageSettlement.com.**
**یک نسخه از این اطلاعیه به زبان فارسی در www.IPWageSettlement.com. موجود است.**
**ਇਸ ਨੋਟਿਸ ਦਾ ਪੰਜਾਬੀ ਅਨੁਵਾਦ www.IPWageSettlement.com.'ਤੇ ਉਪਲਬਧ ਹੈ। · Версия этого Уведомления на русском языке доступна на www.IPWageSettlement.com. · Nuqulka Ogeysiiskan oo Af-Soomaali ah ayaa laga heli karaa www.IPWageSettlement.com.** · កំណែជា ភាសាខ្មែរ នៃសេចក្តីជូនដំណឹងនេះ គឺអាចរកបាននៅ **www.IPWageSettlement.com។ · Una versión en español de este aviso está disponible en www.IPWageSettlement.com. · Версія цього Повідомлення доступна українською тут www.IPWageSettlement.com.. · Một phiên bản của Thông Báo này hiện có bằng Tiếng Việt tại www.IPWageSettlement.com. · 此通知函的中文版位于www.IPWageSettlement.com. 。** · 이 알림 버전은 **www.IPWageSettlement.com** 에서 한국어로 이용가능합니다. · **ਇਸ ਨੋਟਿ ਸ ਦਾ ਪੰਜਾਬੀ ਅਨੁਵਾਦ www.IPWageSettlement.com. 'ਤੇ ਉਪਲਬਧ ਹੈ।**

## ຣາຍຣະອຽດພື້ນຖານ

## 1. ເປັນຫຍັງຂ້ອຍຈຶ່ງໄດ້ຮັບໃບແຈ້ງການໃບນີ້?

ທ່ານໄດ້ຮັບໃບແຈ້ງການໃບນີ້ຍ້ອນວ່າບັນທຶກຂອງກົມ Washington's Department of Social and Health Services (DSHS) ສະແດງໃຫ້ເຫັນວ່າທ່ານເປັນຫລືເຄີຍເປັນຜູ້ບໍຣິການສ່ວນບຸກຄົນ (IP) ຜູ້ທີ່ໄດ້ເຮັດສັນຍານຳກົມ DSHS ໃນເວລາໃດເວລານຶ່ງໃນຣະຫວ່າງເດືອນມາກຊ໌ 7, 2014, ແລະເດືອນເຟບຣູຣີ 28, 2021, ເພື່ອຈະເອົາການບໍຣິການເບິ່ງແຍງດູແລສ່ວນບຸກຄົນໃຫ້ສຳລັບລູກຄ້າຜູ້ທີ່ຊົ່ວໂມງຂອງການເບິ່ງແຍງດູແລທີ່ຖືກຈ່າຍເງິນໃຫ້ຂອງເຂົາເຈົ້າໄດ້ຖືກລຸດລົງຍ້ອນວ່າຍ້ອນວ່າກົມ DSHS ໄດ້ຫມາຍສະພາບຂອງລູກຄ້າຢູ່ໃນການປະເມີນຜົນ CARE ວ່າເປັນ "ສະວັດດີການຮ່ວມກັນ" ສຳລັບພາລະກິດຢ່າງຫນ້ອຍອັນນຶ່ງ.

ສານໄດ້ສັ່ງໃຫ້ສົ່ງໃບແຈ້ງການໃບນີ້ໄປໃຫ້ທ່ານຍ້ອນວ່າທ່ານມີສິດທິທີ່ຈະຮູ້ຈັກກ່ຽວກັບການຕົກລົງແກ້ໄຂຄະດີທີ່ຖືກວາງອອກມາແລະສິດທິແລະທາງເລືອກເອົາຕາມກົດຫມາຍຂອງທ່ານກ່ອນທີ່ສານຈະຕັດສິນວ່າຈະອະນຸມັດການຕົກລົງແກ້ໄຂຄະດີຫລືບໍ່.ການຟ້ອງຂື້ນສານອັນນີ້ໄດ້ເປັນທີ່ຮູ້ຈັກກັນວ່າ *Liang, et al. v. State of Washington, et al.*, No. 20-2-02506-34; ກຳລັງຖືກໂຈະລໍຢູ່ໃນສານສູງສຸດ Washington Superior Court for Thurston County; ແລະໄດ້ຖືກນຳຂື້ນມາໂດຍ IPs ບາງຄົນ (ຖືກອ້າງອີງວ່າເປັນ "ໂຈດ" ຢູ່ໃນໃບແຈ້ງການໃບນີ້) ຕໍ່ສູ້ກັບ State of Washington, DSHS, ແລະ DSHS Secretary (ລວມເຂົ້າກັນຖືກອ້າງອີງວ່າເປັນ "DSHS" ຢູ່ໃນໃບແຈ້ງການໃບນີ້).

## 2. ການຟ້ອງຂື້ນສານອັນນີ້ແມ່ນກ່ຽວກັບຫຍັງ?

ໂຈດກ່າວຫາວ່າຕັ້ງແຕ່ເດືອນມາກຊ໌ 7, 2014, ໄປເຖິງເດືອນເຟບຣູຣີ 28, 2021, DSHS ບໍ່ໄດ້ຈ່າຍເງິນໃຫ້ IPs ບາງຄົນເງິນຄ່າແຮງງານທຸກໆຢ່າງທີ່ເຂົາເຈົ້າຍັງຖືກຕິດຄ້າງຢູ່.ໂຈດເວົ້າວ່າອັນນີ້ໄດ້ເກີດຂື້ນເມື່ອເວລາກົມ DSHS ໄດ້ລຸດຊົ່ວໂມງເບິ່ງແຍງດູແລທີ່ຖືກຈ່າຍເງິນໃຫ້ລົງຍ້ອນວ່າເຂົາໄດ້ພົບວ່າ IP ແລະລູກຄ້າ,ຫລືລູກຄ້າຫລາຍໆຄົນຢູ່ໃນຄອບຄົວດຽວກັນ,ໄດ້ຮັບຮ່ວມກັນໃນສະວັດດີການຂອງພາລະກິດການເບິ່ງແຍງດູແລສ່ວນຕົວບາງຢ່າງທີ່ຖືກປະຕິບັດໂດຍ IP, ເຊັ່ນວ່າການເຮັດຄາບເຂົ້າ,ການອອກຕະລາດ,ວຽກບ້ານ,ຫລືຫາຟືນມາໄວ້.ການຟ້ອງຂື້ນສານປວງເອົາການຈ່າຍເງິນປ້ອນຫລັງແລະຄວາມເສັຽຫາຍດ້ານການເງິນອື່ນໆພາຍໃຕ້ສັນຍານຳຮັດແລະກົດຫມາຍຄ່າແຮງງານສຳລັບວຽກງານທີ່ໂຈດທວງວ່າ IPs ໄດ້ເຮັດວຽກໂດຍບໍ່ຖືກຈ່າຍເງິນໃຫ້.

DSHS ປະຕິເສດວ່າເຂົາເຈົ້າໄດ້ລ່ວງລະເມີດກົດຫມາຍແນວໃດແນວນຶ່ງຫລືໄດ້ເຮັດແນວໃດແນວນຶ່ງຜິດ.

## 3. ການຕົກລົງແກ້ໄຂຄະດີເປັນກຸ່ມແມ່ນຫຍັງ?

ການຟ້ອງຂື້ນສານເປັນກຸ່ມແມ່ນການຟ້ອງຂື້ນສານຊະນິດນຶ່ງຊຶ່ງໂຈດຜູ້ທີ່ຖືກບົ່ງຊື່ໄດ້ຍື່ນຟ້ອງສຳລັບເຂົາເຈົ້າເອງແລະສຳລັບຄົນອື່ນໆອີກຜູ້ທີ່ຢູ່ໃນສະພາບຄ້າຍຄືກັນ.ຢູ່ໃນຄະດີນີ້,ໂຈດແມ່ນ IPs ສາມຄົນ Sylvia Liang, Manuel Brito, ແລະ Shazia Anwar. IPs ຄົນອື່ນແມ່ນເປັນທີ່ຮູ້ຈັກກັນວ່າແມ່ນ "ສະມາຊິກໃນກຸ່ມ." ຢູ່ໃນການຟ້ອງຂື້ນສານເປັນກຸ່ມ,ສານບ່ອນນຶ່ງໄດ້ແກ້ໄຂບັນຫາສຳລັບສະມາຊິກໃນກຸ່ມທຸກໆຄົນ,ຍົກເວັ້ນສຳລັບຜູ້ທີ່ຍົກເວັ້ນເຂົາເຈົ້າເອງອອກຈາກກຸ່ມ.

ສານໄດ້ຢັ້ງຢືນຄະດີນີ້ວ່າເປັນການຟ້ອງຂື້ນສານເປັນກຸ່ມເທົ່ານັ້ນສຳລັບຈຸດປະສົງຂອງການຕົກລົງແກ້ໄຂຄະດີທີ່ຖືກວາງອອກມາ.ສານບໍ່ໄດ້ຕັດສິນວ່າຄະດີນີ້ຄວນຈະຖືກຢັ້ງຢືນວ່າເປັນການຟ້ອງຂື້ນສານເປັນກຸ່ມຫລືບໍ່ສຳລັບຈຸດປະສົງຂອງການຕັດສິນຄຸນຄ່າຂອງການທວງຂອງໂຈດ.ຖ້າຫາກວ່າສານບໍ່ເຮັດການອະນຸມັດຂອງການຕົກລົງແກ້ໄຂຄະດີຂັ້ນສຸດທ້າຍອອກມາດ້ວຍເຫດຜົນໃດກໍຕາມ,ມັນຈະບໍ່ມີການຕົກລົງແກ້ໄຂຄະດີແລະທຸກຝ່າຍຈະກັບຄືນໄປຟ້ອງຄະດີໃຫມ່ອີກ. IPs ຜູ້ທີ່ຖືກຄຸ້ມກັນໂດຍການຕົກລົງແກ້ໄຂຄະດີໄດ້ເປັນທີ່ຮູ້ຈັກກັນວ່າແມ່ນ "ສະມາຊິກຂອງກຸ່ມການຕົກລົງແກ້ໄຂຄະດີ," ຍົກເວັ້ນແຕ່ສຳລັບຜູ້ທີ່ຍົກເວັ້ນເຂົາເຈົ້າເອງຈາກກຸ່ມການຕົກລົງແກ້ໄຂຄະດີ.

## 4. ເປັນຫຍັງມັນຈຶ່ງມີການຕົກລົງແກ້ໄຂຄະດີ?

ທັງສອງຝ່າຍເຊື່ອວ່າເຂົາເຈົ້າຈະຊະນະຢູ່ໃນສານ,ແຕ່ວ່າສານບໍ່ໄດ້ຕັດສິນອອກມາໂດຍການເຂົ້າຂ້າງຝ່າຍໃດຝ່າຍນຶ່ງ.ທັງສອງຝ່າຍເຫັນພ້ອມນຳກັນໃນການຕົກລົງແກ້ໄຂຄະດີເພື່ອຈະຫລີກເວັ້ນຄ່າໃຊ້ຈ່າຍ,ການຊັກຊ້າ,ການສ່ຽງ,ແລະຄວາມບໍ່ແນ່ນອນທີ່ພົວພັນນຳການແຕ່ສອບຂື້ນສານແລະການອຸທອນ.ເຂົາເຈົ້າເຮັດຢ່າງນັ້ນຫລັງຈາກການສືບສວນຍາວນານແລະການແລກປ່ຽນຣາຍຣະອຽດ.ສະມາຊິກກຸ່ມການຕົກລົງແກ້ໄຂຄະດີຜູ້ທີ່ມີສິດໄດ້ຮັບພາຍໃຕ້ການຄິດໄລ່ທີ່ຖືກບັນຣະຍາຍຢູ່ໃນ Section 10 ຢູ່ຂ້າງລຸ່ມນີ້ໄດ້ຮັບການທົດແທນໃຊ້ຄືນ.

ຈຳເລີຍແລະທະນາຍຄວາມຂອງເຂົາເຈົ້າ (ທະນາຍຄວາມຂອງກຸ່ມ) ຄິດວ່າການຕົກລົງແກ້ໄຂຄະດີແມ່ນຜົນປະໂຍດອັນດີທີ່ສຸດຂອງສະມາຊິກກຸ່ມການຕົກລົງແກ້ໄຂຄະດີແລະວ່າເງື່ອນໄຂຂອງການຕົກລົງແກ້ໄຂຄະດີແມ່ນຍຸຕິທັມ,ສົມເຫດສົມຜົນ,ແລະດີພຽງພໍ.

## ແມ່ນໃຜແດ່ຢູ່ໃນການຕົກລົງແກ້ໄຂຄະດີ?

### 5. ແມ່ນໃຜເປັນສ່ວນນຶ່ງຂອງກຸ່ມການຕົກລົງແກ້ໄຂຄະດີ?

ກຸ່ມການຕົກລົງແກ້ໄຂຄະດີໄດ້ຖືກຕີຄວາມຫມາຍວ່າແມ່ນ: " IPs ຄົນປັດຈຸບັນແລະໃນອະດີດທຸກໆຄົນຜູ້ທີ່ໄດ້ເຮັດສັນຍານຳກົມ DSHS ເພື່ອຈະເອົາການເບິ່ງແຍງດູແລສ່ວນຕົວໃຫ້ສຳລັບລູກຄ້າຜູ້ທີ່ຊົ່ວໂມງເບິ່ງແຍງດູແລຢູ່ໃນເຮືອນຂອງເຂົາເຈົ້າໄດ້ຖືກລຸດລົງຍ້ອນວ່າກົມ DSHS, ຜ່ານນາຍຫນ້າຂອງເຂົາເຈົ້າ,ໄດ້ຫມາຍໃສ່ລູກຄ້າຢູ່ໃນການປະເມີນຜົນ CARE ວ່າມີສະພາບວ່າເປັນ 'ສະວັດດີການຮ່ວມກັນ' ໂດຍການເບິ່ງໃສ່ອັນນຶ່ງຫລືຫລາຍກວ່າ IADLs."

### 6. ຂ້າພະເຈົ້າເປັນສ່ວນນຶ່ງຂອງກຸ່ມການຕົກລົງແກ້ໄຂຄະດີບໍ່?

ແມ່ນ, ນອກຈາກວ່າທ່ານໄດ້ຍົກເວັ້ນຕົວທ່ານເອງອອກໂດຍການເລືອກອອກໄປ (ເບິ່ງພາກສ່ວນ 15–16). ທ່ານໄດ້ຮັບໃບແຈ້ງການໃບນີ້ຍ້ອນວ່າບັນທຶກຂອງກົມ DSHS ສະແດງໃຫ້ເຫັນວ່າທ່ານໄດ້ເຮັດວຽກໃຫ້ຢ່າງຫນ້ອຍລູກຄ້າຄົນນຶ່ງຜູ້ທີ່ຊົ່ວໂມງເບິ່ງແຍງດູແລທີ່ຖືກອະນຸຍາດໃຫ້ໄດ້ຖືກລຸດລົງໃນຣະຫວ່າງຣະຍະເວລາຂອງກຸ່ມຍ້ອນວ່າກົມ DSHS ໄດ້ຫມາຍໃສ່ "ສະພາບ" ຂອງລູກຄ້າຢູ່ໃນການປະເມີນຜົນ CARE ວ່າເປັນ "ສະວັດດີການແລກປ່ຽນ" ສຳລັບຢ່າງຫນ້ອຍພາລະກິດການເບິ່ງແຍງດູແລສ່ວນຕົວພາລະກິດນຶ່ງ.

### 7. ຖ້າຫາກວ່າຂ້າພະເຈົ້າບໍ່ໄດ້ຮັບໃບແຈ້ງການໂດຍກົງໂລດເດ,ແຕ່ວ່າຄິດວ່າເປັນສະມາຊິກຂອງກຸ່ມການຕົກລົງແກ້ໄຂຄະດີ?

ຖ້າຫາກວ່າທ່ານບໍ່ໄດ້ຮັບໃບແຈ້ງການໃບນີ້ໂດຍກົງໂລດແຕ່ວ່າຄິດວ່າທ່ານໄດ້ເຮັດວຽກໃຫ້ລູກຄ້າຂອງກົມ DSHS ຜູ້ທີ່ຊົ່ວໂມງເບິ່ງແຍງດູແລສ່ວນຕົວທີ່ຖືກອະນຸຍາດໃຫ້ຂອງເຂົາເຈົ້າໄດ້ຖືກລຸດລົງໃນຣະຫວ່າງຣະຍະເວລາການຟ້ອງເປັນກຸ່ມຍ້ອນວ່າກົມ DSHS ໄດ້ປະເມີນຜົນລູກຄ້າວ່າມີ "ສະວັດດີການແລກປ່ຽນ", ກະຣຸນາຕິດຕໍ່ຫາຜູ້ບໍຣິຫານການຕົກລົງແກ້ໄຂຄະດີໄດ້ທີ່ເລກ 888-964-0102.

## ສະວັດດີການການຕົກລົງແກ້ໄຂຄະດີ—ທ່ານຈະໄດ້ຫຍັງ

### 8. ການຕົກລົງແກ້ໄຂຄະດີເອົາຫຍັງໃຫ້ແດ່?

DSHS ໄດ້ຕົກລົງເຫັນພ້ອມນຳທີ່ຈະຈ່າຍເງິນ $116,068,000, ຊຶ່ງຈະຖືກໃຊ້ສຳລັບການຈ່າຍເງິນໃຫ້ສະມາຊິກກຸ່ມການຕົກລົງແກ້ໄຂຄະດີ, ສ່ວນແບ່ງພາສີເງິນເງິນເດືອນຂອງກົມ DSHS ແລະ IP, ຄ່າທຳນຽມແລະຄ່າໃຊ້ຈ່າຍຂອງທະນາຍຄວາມຂອງກຸ່ມ.ແລະຄ່າໃຊ້ຈ່າຍຂອງການບໍຣິຫານແລະໃບແຈ້ງການຂອງການຕົກລົງແກ້ໄຂຄະດີ,ແລະ.ຖ້າກ່ຽວນຳ,ຄ່າຈ່າຍຄ່າຢູນຽມ.

### 9. ການຈ່າຍເງິນຂອງຂ້າພະເຈົ້າຈະຕົກເປັນເທົ່າໃດ?

ການຈ່າຍເງິນທີ່ຖືກກະໄວ້ຂອງທ່ານຈະແມ່ນ [ຖືກເອົາໃຫ້ໂດຍຜູ້ບໍຣິຫານ].
ຄືກັນກັບສະມາຊິກກຸ່ມການຕົກລົງແກ້ໄຂຄະດີຄົນອື່ນໆທຸກໆຄົນ,ການຈ່າຍເງິນສ່ວນບຸກຄົນຂອງທ່ານຈະຖືກຄິດໄລ່ເປັນສ່ວນແບ່ງ (ຫລືຕາມອັດສ່ວນ) ຂອງການຕົກລົງແກ້ໄຂຄະດີໂດຍອີງຕາມຈຳນວນຊົ່ວໂມງທີ່ໂຈດທວງເອົາວ່າທ່ານໄດ້ເຮັດວຽກໂດຍບໍ່ຖືກຈ່າຍເງິນໃຫ້ໃນຣະຫວ່າງຣະຍະເວລາຂອງການຟ້ອງເປັນກຸ່ມແລະອັດຕຣາເງິນຄ່າແຮງງານທີ່ຖືກໃຊ້ສຳລັບຊົ່ວໂມງເຫລົ່ານັ້ນ.

### 10. ການຈ່າຍເງິນຂອງຂ້າພະເຈົ້າໄດ້ຖືກຄິດໄລ່ແນວໃດ?

ທຸກຝ່າຍເຫັນພ້ອມນຳກັນໃນແບບວິທີເພື່ອຈະຄິດໄລ່ການຈ່າຍເງິນສຳລັບສະມາຊິກຂອງກຸ່ມການຕົກລົງແກ້ໄຂຄະດີແຕ່ລະຄົນ,ຂອງໃຜຂອງມັນ,ໂດຍອີງຕາມຂໍ້ມູນຢູ່ໃນບັນທຶກຂອງກົມ DSHS. ຂໍ້ມູນສະແດງໃຫ້ເຫັນວ່າລູກຄ້າຄົນໃດທີ່ກົມ DSHS ໄດ້ປະເມີນຜົນວ່າມີ "ສະວັດດີການຮ່ວມກັນ," IPs ຜູ້ທີ່ເບິ່ງແຍງດູແລລູກຄ້າຜູ້ທີ່ວ່າ,ມີຈັກຊົ່ວໂມງທີ່ຖືກອະນຸຍາດໃຫ້ໄດ້ຖືກລຸດລົງແລະບໍ່ຖືກຈ່າຍເງິນໃຫ້ຍ້ອນການຫມາຍໃສ່ສະພາບວ່າເປັນ "ສະວັດດີການຮ່ວມກັນ" , ຜູ້ເບິ່ງແຍງດູແລທີ່ຖືກຈ່າຍເງິນໃຫ້ຜູ້ທີ່ຖືກແຕ່ງຕັ້ງໃສ່ພາລະກິດ "ສະວັດດີການຮ່ວມກັນ" , ແລະວ່າຣັດໄດ້ຈ່າຍເງິນໃຫ້ຜູ້ເບິ່ງແຍງດູແລເທົ່າໃດ.

ສ່ວນແບ່ງຂອງການຕົກລົງແກ້ໄຂຄະດີທີ່ຖືກຄາດຫມາຍໄວ້ຂອງທ່ານໄດ້ຖືກຄິດໄລ່ໂດຍການຫານເງິນຈ່າຍຄືນທີ່ຖືກຄາດຫມາຍຂອງທ່ານໃສ່ເງິນຈ່າຍຄືນທັງຫມົດສຳລັບສະມາຊິກກຸ່ມການຕົກລົງແກ້ໄຂຄະດີທັງຫມົດ,ແລະຄູນຈຳນວນນັ້ນໃຫ້ $105 ລ້ານດອນລາ. $105 ລ້ານດອນລາແມ່ນເງິນທຶນຂອງການຕົກລົງແກ້ໄຂຄະດີທັງຫມົດລົບຈຳນວນທີ່ຖືກກັກໄວ້ເພື່ອຈະຈ່າຍຄືນສ່ວນແບ່ງຂອງພາສີຣາຍໄດ້ຂອງກົມ DSHS. ຄ່າທຳນຽມແລະຄ່າໃຊ້ຈ່າຍຂອງທະນາຍຄວາມຂອງກຸ່ມຄະດີ,ຄ່າໃຊ້ຈ່າຍຂອງການບໍຣິຫານການຕົກລົງແກ້ໄຂຄະດີແລະຄ່າໃບແຈ້ງການເຖິງກຸ່ມ,ແລະຄ່າໃຊ້ຈ່າຍອື່ນໆ.

ການຈ່າຍເງິນຄືນສຳລັບການຄິດໄລ່ອັນນີ້ແມ່ນຈຳນວນຊົ່ວໂມງທີ່ບໍ່ທັນຖືກຈ່າຍເງິນໃຫ້ເທື່ອຍ້ອນ "ສະວັດດີການຮ່ວມກັນ" ຄູນໃຫ້ອັດຕຣາຄ່າແຮງງານທີ່ໃຊ້ໄດ້ (ລວມທັງຊົ່ວໂມງເຮັດວຽກເກີນເວລາ,ຕາມທີ່ໃຊ້ໄດ້) ,ໂດຍບໍ່ມີຄ່າເສັຽຫາຍຫລືດອກເບັ້ຽ.ຖ້າຫາກວ່າຜູ້ບໍຣິການຫລາຍໆຄົນສຳລັບລູກຄ້າຄົນດຽວກັນຖືກສະທ້ອນເຖິງໂດຍ "ສະວັດດີການຮ່ວມກັນ" ໃນເດືອນດຽວກັນ,ຊົ່ວໂມງທີ່ບໍ່ຖືກຈ່າຍເງິນໃຫ້ໄດ້ຖືກຢາຍອອກໄປໃຫ້ສົມສ່ວນທຸກໆຄົນ.

ຖ້າຫາກວ່າສະມາຊິກຂອງກຸ່ມຄົນອື່ນໆບໍ່ແລກປ່ຽນເຊັກເງິນຂອງເຂົາເຈົ້າເອົາເງິນສົດຫລືຄ່າໃຊ້ຈ່າຍຂອງການຕົກລົງແກ້ໄຂຄະດີອື່ນໆຕ່ຳກວ່າຕາມທີ່ຖືກຄາດຄະເນໄວ້,ທ່ານອາດຈະໄດ້ຮັບການຈ່າຍເງິນສອງເທື່ອເພີ້ມເຕີມອີກຊຶ່ງຈະເປັນສ່ວນແບ່ງຕາມເຫມາະສົມຂອງທ່ານຂອງເງິນທຶນການຕົກລົງແກ້ໄຂຄະດີທັງຫມົດທີ່ຍັງເຫລືອຢູ່,ບວກກັບດອກເບັ້ຽທີ່ຖືກຄິດໄລ່ບວກໃສ່ເງິນທຶນ.

## 11. ເປັນຫຍັງການຈ່າຍເງິນທີ່ຖືກຄາດຄະເນໄວ້ຂອງຂ້າພະເຈົ້າຈຶ່ງຫລາຍກວ່າຫລືຫນ້ອຍກວ່າຂອງຄົນອື່ນ?

ເງິນຂອງການຕົກລົງແກ້ໄຂຄະດີໄດ້ຖືກແບ່ງປັນສ່ວນໃນຣະຫວ່າງສະມາຊິກກຸ່ມການຕົກລົງແກ້ໄຂຄະດີໂດຍອີງຕາມເປີເຊັນຂອງການແບ່ງສ່ວນເງິນທຶນ (ເຊັ່ນວ່າ,ຕາມເຫມາະສົມສ່ວນ) ,ຄິດໄລ່ເອົາໃສ່ບັນຊີຄວາມເສັຽຫາຍສ່ວນບຸກຄົນທີ່ຖືກຄາດຄະເນໄວ້ຂອງ IP ແຕ່ລະຄົນໃຫ້ເປັນພາກສ່ວນນຶ່ງຂອງຄວາມເສັຽຫາຍທົ່ວໄປທັງຫມົດ.ຈຳນວນເງິນຂອງການຕົກລົງແກ້ໄຂຄະດີຂອງສ່ວນບຸກຄົນຈະແຕກຕ່າງກັນໄປອີງຕາມຂໍ້ມູນຄວາມຈິງເຊັ່ນວ່າຄວາມຍາວຂອງຣະຍະເວລາທີ່ IP ໄດ້ເຮັດວຽກໃນຣະຫວ່າງເດືອນມາກຊ໌ 7, 2014, ແລະເດືອນເຟບຣູຣີ 28, 2021, ຈຳນວນຂອງຊົ່ວໂມງເບິ່ງແຍງດູແລທີ່ໄດ້ຖືກລຸດລົງຈາກຊົ່ວໂມງທີ່ຖືກອະນຸມັດຍ້ອນ "ສະວັດດີການຮ່ວມກັນ" (ຊຶ່ງສາມາດແຕກຕ່າງກັນຫລາຍຂຶ້ນນຳຊົ່ວໂມງເບິ່ງແຍງດູແລທັງຫມົດຂອງລູກຄ້າແລະ ຕົກເປັນເທົ່າໃດທີ່ກົມ DSHS ໄດ້ຕັດສິນວ່າຈະແມ່ນເທົ່າໃດ) ,ອັດຕຣາຄ່າແຮງງານຂອງ IP, ແລະວ່າອັດຕຣາຄ່າເຮັດວຽກເກີນເວລາໄດ້ຖືກໃຊ້ຫລືບໍ່.

## 12. ເປັນຫຍັງສ່ວນແບ່ງທີ່ຖືກຄາດຄະເນໄວ້ຂອງຂ້າພະເຈົ້າອາດຈະເປັນສູນດອນລາ?

ທ່ານອາດຈະເປັນສະມາຊິກຂອງກຸ່ມຂອງການຕົກລົງແກ້ໄຂຄະດີແຕ່ວ່າບໍ່ບໍ່ຖືກຕິດຫນີ້ເງິນແນວໃດຖ້າຫາກວ່າບັນທຶກຂອງກົມ DSHS ສະແດງໃຫ້ເຫັນຜູ້ບໍຣິການຄົນອື່ນໆ,ແລະບໍ່ແມ່ນທ່ານ,ໄດ້ຖືກແຕ່ງຕັ້ງໃສ່ພາລະກິດ "ສະວັດດີການຮ່ວມກັນ" ຢູ່ໃນແຜນການເບິ່ງແຍງດູແລຂອງລູກຄ້າ,ຖ້າຫາກວ່າກົມ DSHS ບໍ່ໄດ້ເລືອກເອົາ "ສະວັດດີການຮ່ວມກັນ" ໃຫ້ເປັນ "ສະພາບ" ສຳລັບລູກຄ້າ,ຫລືຖ້າຫາກວ່າກົມ DSHS ໄດ້ປະເມີນຜົນສະວັດດີການຮ່ວມກັນນອກຣະຍະເວລາການຟ້ອງຂຶ້ນສານເປັນກຸ່ມ.

## 13. ເງື່ອນໄຂສຳຄັນຢ່າງອື່ນໆຂອງການຕົກລົງແກ້ໄຂຄະດີແມ່ນຫຍັງແດ່?

**ຫລັກຖານພິສູດ:** ໂດຍການແລກປ່ຽນເອົາເງິນສົດຫລືການຝາກໃສ່ບັນຊີການຈ່າຍເງິນຂອງການຕົກລົງແກ້ໄຂຄະດີຂອງທ່ານ,ທ່ານໄດ້ພິສູດວ່າ:

1. ທ່ານເປັນຫລືເຄີຍເປັນ IP ສຳລັບລູກຄ້າຜູ້ທີ່ການອະນຸມັດການເບິ່ງແຍງດູແລສ່ວນຕົວຢູ່ໃນເຮືອນປະຈຳເດືອນຂອງເຂົາເຈົ້າໄດ້ຖືກລຸດລົງຍ້ອນວ່າ "ສະວັດດີການຮ່ວມກັນ" ທີ່ທ່ານໄດ້ເອົາໃຫ້;
2. ທ່ານໄດ້ເອົາການບໍຣິການເບິ່ງແຍງດູແລສ່ວນຕົວຢູ່ໃນເຮືອນໃຫ້ແກ່ລູກຄ້າຄົນນັ້ນຊຶ່ງໄດ້ຖືກລວມໃສ່ຢູ່ໃນແຜນການເບິ່ງແຍງດູແລຂອງລູກຄ້າສຳລັບຢ່າງຫນ້ອຍຈຳນວນຊົ່ວໂມງທີ່ຖືກດັດແປງຂອງສະວັດດີການຮ່ວມກັນຊຶ່ງຖືກຊີ້ບອກຢູ່ໃນຂໍ້ມູນຂອງກົມ DSHS, ເປັນເດືອນແລະປີ,ຊຶ່ງໄດ້ຖືກໃຊ້ເພື່ອຈະຄິດໄລ່ສ່ວນແບ່ງເປັນສ່ວນແບ່ງກັນ (ເຫມາະສົມສ່ວນ) ຂອງເງິນທຶນການຕົກລົງແກ້ໄຂຄະດີ (ຊົ່ວໂມງເຫລົ່ານີ້ໄດ້ຖືກບົ່ງຢູ່ຫນ້າ 9 ຂອງໃບແຈ້ງການໃບນີ້) ;ແລະ
3. ທ່ານບໍ່ຖືກຈ່າຍເງິນໃຫ້ສຳລັບການບໍຣິການເຫລົ່ານີ້.

**ການແຈກຢາຍໃຫມ່:** ຖ້າຫາກວ່າທ່ານບໍ່ແລກເຊັກເອົາເງິນສົດຫລືຝາກເງິນເຂົ້າບັນຊີເງິນຈ່າຍການຕົກລົງແກ້ໄຂຄະດີຂອງທ່ານ,ສ່ວນແບ່ງຂອງທ່ານ (ແລະດອກເບັ້ຽຕ່າງໆ) ຈະຖືກແຈກຢາຍໃຫມ່ອີກໃຫ້ແກ່ສະມາຊິກກຸ່ມການຕົກລົງແກ້ໄຂຄະດີ.ຄ້າຍຄືກັນອີກຄືກັນ,ຖ້າຫາກວ່າສະມາຊິກກຸ່ມການຕົກລົງແກ້ໄຂຄະດີຄົນອື່ນໆບໍ່ແລກເຊັກຂອງເຂົາເຈົ້າເອົາເງິນສົດ,ສ່ວນແບ່ງຂອງເຂົາເຈົ້າຈະຖືກແຈກຢາຍໃຫມ່ໃຫ້ກຸ່ມການຕົກລົງແກ້ໄຂຄະດີ (ລວມທັງຕົວທ່ານ,ຖ້າຫາກວ່າທ່ານບໍ່ຖອນຕົວອອກ) .ມັນຈະມີການແຈກຢາຍໃຫມ່ອີກສອງເທື່ອ.ການຈ່າຍເງິນອັນໃດທີ່ບໍ່ຖືກແລກປ່ຽນເອົາເງິນຫລັງຈາກການແຈກຢາຍເທື່ອທີສອງຈະຖືກສົ່ງກັບຄືນໄປຫາຣັດ.

**ພາສີເງິນເດືອນ:** ການຈ່າຍເງິນການຕົກລົງແກ້ໄຂຄະດີຂອງທ່ານແມ່ນການຈ່າຍຍ້ອນຫລັງທີ່ຕ້ອງຈ່າຍໃສ່ຣາຍໄດ້ແລະພາສີເງິນເດືອນທີ່ກ່ຽວຂ້ອງ. ຜູ້ບໍຣິຫານການຕົກລົງແກ້ໄຂຄະດີຈະລາຍງານຈຳນວນເງິນນີ້ໄປຫາພະແນກ IRS ໃສ່ໃນໃບຟອມ W-2.

**ຄ່າທຳນຽມຢູນຽນ:** ຖ້າຫາກວ່າທ່ານໃນປັດຈຸບັນນີ້ເປັນສະມາຊິກຂອງ SEIU 775, ຫລືເຄີຍເປັນສະມາຊິກເມື່ເວລາທ່ານໄດ້ຖືກຈ່າຍເງິນໃຫ້ເທື່ອສຸດທ້າຍໃນຖານະເປັນ IP, ຜູ້ບໍຣິຫານການຕົກລົງແກ້ໄຂຄະດີຈະຫັກອອກ 3.2% ຈາກການຈ່າຍເງິນຂອງທ່ານສຳລັບເດືອນທີ່ທ່ານໄດ້ເປັນສະມາຊິກຂອງ SEIU 775 ແລະຈະສົ່ງເງິນນັ້ນໄປຫາຢູນຽນ.

**ກົດກຳນົດຂອງການຕົກລົງແກ້ໄຂຄະດີ:** ກົດການຕົກລົງແກ້ໄຂຄະດີບົ່ງໃຫ້ຫ້ອງການຂອງຣັດຖະບານກາງທີ່ດຳເນີນ Medicaid ເພື່ອຈະຢືນຢັນວ່າມັນຈະເອົາເງິນທຶນຂອງຣັດຖະບານກາງທຽບທຽມໃສ່ກັນໃຫ້ສຳລັບການຈ່າຍເງິນການຕົກລົງແກ້ໄຂຄະດີທຸກໆຢ່າງ.ເຂົາເອົາການຢັ້ງຢືນນັ້ນໃຫ້ໃນເດືອນດິເຊັມເບີ 2021. ມັນຍັງບົ່ງອີກຄືກັນໃຫ້ສະພາຂອງຣັດວໍຊິງຕັນເອົາເງິນທຶນໃຫ້ເຕັມທີ່.ສະພາໄດ້ເຮັດແລ້ວໃນເດືອນມາກຊ໌ 2022, ແລະເຈົ້າແຂວງໄດ້ເຊັນງົບປະມານໃນເດືອນມາກຊ໌ 31, 2022.

**ການຖອນຕົວອອກ:** ຖ້າຫາກວ່າຫລາຍກວ່າ 3% ຂອງສະມາຊິກກຸ່ມຕັດສິນໃຈທີ່ຈະຖອນຕົວອອກຈາກການຕົກລົງແກ້ໄຂຄະດີ, DSHS ສາມາດລົບລ້າງການຕົກລົງແກ້ໄຂຄະດີ.

## 14. ຜົນສະທ້ອນຂອງການຢືນຢູ່ໃນກຸ່ມການຕົກລົງແກ້ໄຂຄະດີແມ່ນຫຍັງ?

ນອກຈາກວ່າທ່ານຍົກເວັ້ນຕົວທ່ານເອງອອກ (ຕາມທີ່ຖືກອະທິບາຍຢູ່ໃນພາກສ່ວນ 15 ຂ້າງລຸ່ມນີ້) ,ທ່ານຈະຍັງຢູ່ໃນກຸ່ມການຕົກລົງແກ້ໄຂຄະດີຕໍ່ໄປ. ສານຈະຍົກເລີກຄະດີ “ທີ່ມີຄວາມລຳອຽງ” ຖ້າຫາກວ່າສານອະນຸມັດການຕົກລົງແກ້ໄຂຄະດີ.ຖ້າຫາກວ່າສານເຮັດດັ່ງນັ້ນ,ການຟ້ອງຄະດີຕ່າງໆທີ່ເຄີຍຖືກຫລືສາມາດຖືກລວມໃສ່ໃນຄະດີຟ້ອງສານອັນນີ້,ລວມທັງໂດຍທ່ານເອງ,ຈະຖືກຍົກເລີກຢ່າງຖາວອນ. ອີກຄຳນຶ່ງ,ຄຳສັ່ງລົບລ້າງຂອງສານຈະປິດຫນີ້ແລະປົດປ່ອຍ DSHS ຈາກການທວງເອົາເງິນຄ່າແຮງງານຫລືຄ່າເຮັດວຽກເກີນເວລາທີ່ບໍ່ທັນຖືກຈ່າຍໃຫ້ເທື່ອ,ຄ່າເສັຽຫາຍຕົວຢ່າງຫລືສອງເທົ່າ,ຄ່າທຳນຽມຂອງທະນາຍຄວາມ,ແລະດອກເບັ້ຽທີ່ຖືກຫລືເຄີຍຖືກກ່າວຫາໂດຍໂຈດຫລືສະມາຊິກກຸ່ມການຕົກລົງແກ້ໄຂຄະດີອີງຕາມຄວາມຈິງແລະຄຳກ່າວຫາຢູ່ໃນຄຳຮ້ອງທຸກຣະຫວ່າງເດືອນມາກຊ໌ 7, 2014, ແລະເດືອນເຟບຣູຣີ 28, 2021, ລວມທັງແຕ່ບໍ່ຈຳກັດໄປເຖິງການຟ້ອງຮ້ອງພາຍໃຕ້ກົດຫມາຍຂອງຣັດ Minimum Wage Act, RCW 49.46, Wage Rebate Act, RCW 49.52, ແລະຫນ້າທີ່ຄວາມຈິງໃຈແລະການຕົກລົງທີ່ຍູຕິທັມຢູ່ໃນສັນຍາຣະຫວ່າງ IPs ແລະ DSHS. ເມື່ອເວລາການຟ້ອງທວງເງິນແມ່ນ “ຖືກປົດປ່ອຍ” ຊຶ່ງຫມາຍຄວາມວ່າບຸກຄົນຜູ້ທີ່ຖືກຄຸ້ມກັນໂດຍການປົດປ່ອຍບໍ່ສາມາດຟ້ອງໃນພາຍຫລັງຫລືເອົາຄືນຈາກຣັດຫລືຝ່າຍທີ່ຖືກປົດປ່ອຍອື່ນໆ (ເຊັ່ນວ່າກົມ DSHS ແລະຜູ້ຕາງຫນ້າຂອງເຂົາເຈົ້າ) ສຳລັບການທວງເອົາເງິນທຸກໆຢ່າງທີ່ຖືກຄຸ້ມກັນໂດຍການປົດປ່ອຍອັນນີ້.

ຖ້າຫາກວ່າສານອະນຸມັດການຕົກລົງແກ້ໄຂຄະດີ, DSHS ຍັງຈະປົດປ່ອຍໂຈດແລະສະມາຊິກກຸ່ມການຕົກລົງແກ້ໄຂຄະດີຜູ້ທີ່ບໍ່ໄດ້ເລືອກອອກໄປຈາກກຸ່ມການຕົກລົງແກ້ໄຂຄະດີຈາກການຟ້ອງຄະດີທຸກໆຢ່າງຊຶ່ງຖືກຫລືເຄີຍຖືກກ່າວຫາທີ່ກ່ຽວພັນຕໍ່ການຟ້ອງຂຶ້ນສານອັນນີ້,ລວມທັງການທວງຟ້ອງສຳລັບການລ່ວງລະເມີດຄວາມຮັບຜິດຊອບຕາມສັນຍາໂດຍ IPs, ການກະທຳຕາມສັນຍາໃສ່ສະມາຊິກກຸ່ມການຕົກລົງແກ້ໄຂຄະດີ,ລວມທັງການກະທຳທີ່ທວງວ່າສະມາຊິກກຸ່ມການຕົກລົງແກ້ໄຂຄະດີໄດ້ເຮັດວຽກຊົ່ວໂມງທີ່ບໍ່ຖືກອະນຸຍາດທີ່ກ່ຽວພັນນຳກົດຣະບຽບຂອງສະວັດດີການຮ່ວມກັນ.

## ການຍົກເວັ້ນຕົວທ່ານເອງຈາກການຕົກລົງແກ້ໄຂຄະດີ

ຖ້າຫາກວ່າທ່ານຕ້ອງການຢາກຈະຮັກສາສິດທິທີ່ຈະຟ້ອງກົມ DSHS ໂດຍຕົວທ່ານເອງກ່ຽວກັບບັນຫາທາງກົດຫມາຍຢູ່ໃນກໍຣະນີນີ້,ທ່ານຕ້ອງຍົກເວັ້ນຕົວທ່ານເອງອອກຈາກກຸ່ມການຕົກລົງແກ້ໄຂຄະດີ.ການດຳເນີນການຍົກເວັ້ນຕົວທ່ານເອງອອກຍັງຖືກເອີ້ນອີກຄືກັນວ່າແມ່ນ “ການເລືອກອອກໄປ” ຂອງກຸ່ມການຕົກລົງແກ້ໄຂຄະດີ.

## 15. ຂ້າພະເຈົ້າຈະຖອນຕົວອອກຈາກການຕົກລົງແກ້ໄຂຄະດີໄດ້ແນວໃດ?

ຖ້າຫາກວ່າທ່ານຢາກຈະຍົກເວັ້ນຕົວທ່ານເອງອອກຈາກການຕົກລົງແກ້ໄຂຄະດີ,ທ່ານຕ້ອງສົ່ງທາງໄປສະນີ,ໂດຍທາງໄປະສະນີ First Class United States Mail, ໃບຟອມທີ່ຖືກເອົາໃຫ້ນຳໃບແຈ້ງການໃບນີ້ໄປທີ່

Liang v. State of WA: IP Wage Settlement<br>
c/o JND Legal Administration<br>
PO Box 91373<br>
Seattle, WA 98111

ແລະລວມເອົາຊື່ຂອງທ່ານ,ທີ່ຢູ່ປັດຈຸບັນ,ເລກໂທຣະສັບ,ແລະທີ່ຢູ່ອີແມລ໌.ເພື່ອຈະມີຜົນໃຊ້ການໄດ້,ໃບແຈ້ງການຖອນຕົວອອກຕ້ອງຖືກຂຽນປະກອບ,ເຊັນຊື່ໃສ່,ແລະຕີກາໄປສະນີໂດຍບໍ່ກາຍເກີນເດືອນ ເດືອນຈຸນລາຍ 22, 2022.

ຖ້າຫາກວ່າທ່ານຍື່ນຄຳຮ້ອງຂໍທີ່ມີຄຸນຄ່າໃຊ້ໄດ້ແລະທັນຕາມເວລາສຳລັບການຍົກເວັ້ນອອກຈາກກຸ່ມການຕົກລົງແກ້ໄຂຄະດີ,ທ່ານຈະບໍ່ມີສິດທີ່ຈະໄດ້ຮັບສະວັດດີການແນວໃດຈັກຢ່າງພາຍໃຕ້ສັນຍາຂອງການຕົກລົງແກ້ໄຂຄະດີທີ່ຖືກວາງອອກມາ,ແລະທ່ານຈະບໍ່ຖືກບັງຄັບໃສ່ຂໍ້ຄວາມຂອງມັນຫລືການປົດປ່ອຍຈາກການທວງຫລືການຍົກເລີກແນວໃດຖ້າຫາກວ່າການຕົກລົງແກ້ໄຂຄະດີໄດ້ຖືກອະນຸມັດໂດຍສານ.ທ່ານອາດຈະຍັງສາມາດທີ່ຈະຍື່ນຟ້ອງ (ຫລືດຳເນີນທີ່ຈະຟ້ອງຕໍ່ໄປ) DSHS ໃນອະນາຄົດ,ຖ້າຫາກວ່າການຟ້ອງທວງຂອງທ່ານໄດ້ເກີດຂື້ນມາພາຍໃນກົດໝາຍຂອບເຂດເວລາທີ່ກ່ຽວຂ້ອງນຳ. ຖ້າຫາກວ່າທ່ານຕ້ອງການຢາກໃຫ້ຍົກເວັ້ນທ່ານເອງອອກໄປເພື່ອວ່າຈະຍື່ນຄຳຟ້ອງຮ້ອງຂື້ນສານສ່ວນບຸກຄົນໃສ່ຈຳເລີຍ,ທ່ານຄວນຈະເວົ້າລົມນຳທະນາຍຄວາມໂດຍໄວເທົ່າທີ່ເປັນໄປໄດ້ຍ້ອນວ່າການຟ້ອງທວງຂອງທ່ານຈະຖືກບັງຄັບໃສ່ກົດໝາຍຂອບເຂດເວລາ.

## 16. ຖ້າຫາກວ່າຂ້າພະເຈົ້າຍົກເວັ້ນຕົວຂ້າພະເຈົ້າເອງ,ຂ້າພະເຈົ້າສາມາດໄດ້ຮັບເງິນຈາກການຕົກລົງແກ້ໄຂຄະດີໄດ້ຫລືບໍ່?

ບໍ່ໄດ້.ຖ້າຫາກວ່າທ່ານຖອນຕົວອອກໄປຫລືຍົກເວັ້ນຕົວທ່ານເອງ,ທ່ານຈະບໍ່ໄດ້ຮັບເງິນແນວໃດຈາກການຕົກລົງແກ້ໄຂຄະດີອັນນີ້.ທ່ານຈະຟ້ອງ,ດຳເນີນທີ່ຈະຟ້ອງຕໍ່ໄປ,ຫລືເປັນສ່ວນນຶ່ງຂອງການຟ້ອງຂື້ນສານຕ່າງກັນໃສ່ກົມ DSHS ກ່ຽວກັບການທວງຂື້ນສານອັນດຽວກັນ,ຈະຖືກການຕໍ່ສູ້ທີ່ກ່ຽວຂ້ອງທຸກໆຢ່າງ.

## ການຄັດຄ້ານຕໍ່ການຕົກລົງແກ້ໄຂຄະດີ

ທ່ານສາມາດບອກສານວ່າທ່ານບໍ່ເຫັນພ້ອມນຳການຕົກລົງແກ້ໄຂຄະດີຫລືບາງສ່ວນຂອງມັນ.

## 17. ຂ້າພະເຈົ້າຈະບອກສານວ່າແນວໃດຖ້າຫາກວ່າຂ້າພະເຈົ້າບໍ່ມັກການຕົກລົງແກ້ໄຂຄະດີ?

ຖ້າຫາກວ່າທ່ານຢູ່ໃນກຸ່ມການຕົກລົງແກ້ໄຂຄະດີ,ທ່ານສາມາດຄັດຄ້ານຕໍ່ການຕົກລົງແກ້ໄຂຄະດີຖ້າຫາກວ່າທ່ານບໍ່ມັກພາກສ່ວນໃດສ່ວນນຶ່ງຂອງມັນ. ທ່ານສາມາດບອກເຫດຜົນວ່າເປັນຫຍັງທ່ານຈຶ່ງຄິດວ່າສານບໍ່ຄວນຈະອະນຸມັດມັນ.ສານຈະພິຈາຣະນາເບິ່ງທັດສະນະຂອງທ່ານ.ທ່ານສາມາດຄັດຄ້ານໂດຍການຍື່ນໃບໜັງສືຄັດຄ້ານນຳສານກ່ອນເດືອນ ເດືອນຈຸນລາຍ 22, 2022 ໄດ້ທີ່ 2000 Lakeridge Dr. SW, Bldg. 3, Olympia, WA 98502. ທ່ານຕ້ອງສົ່ງໂກປີຂອງໃບໜັງສືຄັດຄ້ານຂອງທ່ານອີກຄືກັນໄປຫາທະນາຍຄວາມຂອງຈຳເລີຍແລະທະນາຍຄວາມຂອງກົມ DSHS ຕາມທີ່ຢູ່ທີ່ຖືກບົ່ງຢູ່ຂ້າງລຸ່ມ,ຕີກາໄປສະນີບໍ່ກາຍເກີນເດືອນ ເດືອນຈຸນລາຍ 22, 2022.

Jennifer Robbins<br>
Darin M. Dalmat<br>
Sarah E. Derry<br>
Barnard Iglitzin & Lavitt<br>
18 W. Mercer St., Suite 400<br>
Seattle, WA 98119

William McGinty<br>
Dan Judge<br>
Margaret McLean<br>
Sara L. Wilmot<br>
Attorney General's Office<br>
P.O. Box 40124<br>
Olympia, WA 98504

ການຄັດຄ້ານຂອງທ່ານຕ້ອງມີຊື່ຂອງທ່ານ,ທີ່ຢູ່ປັດຈຸບັນ,ເລກໂທຣະສັບ,ແລະທີ່ຢູ່ອີແມລ໌,ລວມທັງເຫດຜົນວ່າເປັນຫຍັງທ່ານຈຶ່ງຄັດຄ້ານ.ທ່ານຍັງຈະມາປາກົດຕົວໂດຍຕົນເອງໃນເວລາຂອງການຟັງເຣື່ອງຂັ້ນສຸດທ້າຍເພື່ອຈະອະທິບາຍການຄັດຄ້ານຂອງທ່ານ.ການຟັງເຣື່ອງຈະເກີດຂື້ນໃນວັນທີແລະເວລາທີ່ຖືກຊີ້ບອກຢູ່ຂ້າງລຸ່ມນີ້.ທ່ານຈະຈ້າງເອົາທະນາຍຄວາມດ້ວຍຄ່າໃຊ້ຈ່າຍຂອງທ່ານເອງເພື່ອຈະເປັນຕົວແທນທ່ານໃນການຟັງເຣື່ອງອັນນີ້ແລະເພື່ອຈະທຳການຄັດຄ້ານຕໍ່ການຕົກລົງແກ້ໄຂຄະດີ.

ມີແຕ່ສະມາຊິກຂອງກຸ່ມການຕົກລົງແກ້ໄຂຄະດີຜູ້ທີ່ຄັດຄ້ານຕໍ່ການຕົກລົງແກ້ໄຂຄະດີທີ່ຖືກວາງອອກມາຜ່ານວິທີການດຳເນີນການເຫລົ່ານີ້ສາມາດອຸທອນຄຳຕັດສິນຕ່າງໆຢູ່ໃນຄະດີນີ້.ຖ້າຫາກວ່າທ່ານບໍ່ຄັດຄ້ານກ່ອນວັນທີຕາຍໂຕ,ທ່ານບໍ່ສາມາດຄັດຄ້ານໄດ້ໃນພາຍຫລັງ.

## 18. ຄວາມແຕກຕ່າງຣະຫວ່າງການຄັດຄ້ານຕໍ່ການຕົກລົງແກ້ໄຂຄະດີແລະການຍົກເວັ້ນຕົວທ່ານເອງແມ່ນຫຍັງ?

ການຄັດຄ້ານເປັນພຽງແຕ່ການບອກສານວ່າທ່ານບໍ່ມັກແນວໃດແນວນຶ່ງກ່ຽວກັບການຕົກລົງແກ້ໄຂຄະດີ.ທ່ານສາມາດຄັດຄ້ານໄດ້ພຽງແຕ່ຖ້າຫາກວ່າທ່ານຍັງຢູ່ໃນກຸ່ມການຕົກລົງແກ້ໄຂຄະດີເທົ່ານັ້ນ.ການຍົກເວັ້ນຕົວທ່ານເອງແມ່ນການບອກສານວ່າທ່ານບໍ່ຕ້ອງການທີ່ຈະເປັນພາກສ່ວນຂອງກຸ່ມການຕົກລົງແກ້ໄຂຄະດີ.ຖ້າຫາກວ່າທ່ານຍົກເວັ້ນຕົວທ່ານເອງ,ທ່ານບໍ່ມີພື້ນຖານແນວໃດທີ່ຈະຄັດຄ້ານຍ້ອນວ່າຄະດີບໍ່ໄດ້ສະທ້ອນເຖິງທ່ານຕໍ່ໄປອີກແລ້ວ.

# ທະນາຍຄວາມຜູ້ທີ່ເປັນຕົວແທນທ່ານ

## 19. ຂ້າພະເຈົ້າມີທະນາຍຄວາມຢູ່ໃນຄະດີນີ້ບໍ່?

ສານໄດ້ຕັດສິນວ່າທະນາຍຄວາມຢູ່ທີ່ Barnard Iglitzin & Lavitt LLP ມີຄຸນນະວຸດທິທີ່ຈະເປັນຕົວແທນທ່ານແລະສະມາຊິກກຸ່ມການຕົກລົງແກ້ໄຂຄະດີທຸກໆຄົນ.ທະນາຍຄວາມເຫລົ່ານີ້ໄດ້ຖືກແຕ່ງຕັ້ງໃຫ້ເປັນ "ທະນາຍຄວາມຂອງກຸ່ມ" ຢູ່ໃນການຟ້ອງຂື້ນສານອັນນີ້.ຣາຍຣະອຽດເພີ້ມເຕີມກ່ຽວກັບວຽກງານແລະປະສົບປະການຂອງທະນາຍຄວາມຈະມີໄວ້ໃຫ້ຢູ່ທີ່ www.workerlaw.com. ທ່ານຈະບໍ່ຖືກເກັບເງິນສຳລັບທະນາຍຄວາມເຫລົ່ານີ້.ຖ້າຫາກວ່າທ່ານຕ້ອງການໃຫ້ຖືກເປັນຕົວແທນໂດຍທະນາຍຄວາມຂອງທ່ານເອງ,ທ່ານຈະຈ້າງເອົາຄົນນຶ່ງໄດ້ດ້ວຍຄ່າໃຊ້ຈ່າຍຂອງທ່ານເອງ.

## 20. ທະນາຍຄວາມຈະຖືກຈ່າຍເງິນໃຫ້ແນວໃດ?

ທະນາຍຄວາມຂອງກຸ່ມຈະຮ້ອງຂໍໃຫ້ສານທີ່ຈະອະນຸມັດການຈ່າຍເງິນເປັນຈຳນວນ $1,625,000 (1.4% ຂອງເງິນການຕກລົງແກ້ໄຂຄະດີ) ສຳລັບຄ່າທຳນຽມຂອງທະນາຍຄວາມແລະຄ່າໃຊ້ຈ່າຍການໄກ່ເກັ່ຽຄະດີ.ຖ້າຫາກວ່າຖືກອະນຸມັດ,ເງິນຈຳນວນນີ້ຈະຖືກຈ່າຍອອກໃຫ້ຈາກເງິນທຶນການຕົກລົງແກ້ໄຂຄະດີທັງຫມົດ.ຖ້າຫາກວ່າວຽກງານຕາມກົດຫມາຍຫລັງຈາກເດືອນເຊັບເທັມເບີ 17, 2021, ມີມູນຄ່າຫລາຍເກີນກວ່າທີ່ທະນາຍຄວາມຂອງກຸ່ມໄດ້ຄາດຫມາຍໄວ້,ເຂົາເຈົ້າຈະຮ້ອງຂໍໃຫ້ສານທີ່ຈະໃຊ້ແທນຄືນໃຫ້ສຳລັບຄ່າທຳນຽມຂອງທະນາຍຄວາມເພີ້ມເຕີມ. DSHS ສາມາດຄັດຄ້ານໄດ້ຖ້າຫາກວ່າທະນາຍຄວາມຂອງກຸ່ມທຳການຮ້ອງຂໍອັນນັ້ນ.ການຕົກລົງແກ້ໄຂຄະດີຍັງມີຜົນໃຊ້ການໄດ້ຢູ່ເຖິງແມ່ນວ່າສານຈະປະຕິເສດຄຳຮ້ອງຂໍເອົາຄ່າທຳນຽມແລະຄ່າໃຊ້ຈ່າຍຂອງທະນາຍຄວາມຂອງກຸ່ມທຸກໆຢ່າງ.

# ການຟັງເຣື່ອງຄວາມຍຸຕິທັມຂອງສານ

## 21. ເມື່ອເວລາໃດຈະແມ່ນການຟັງເຣື່ອງຄວາມຍຸຕິທັມ?

ໃນເດືອນ ເດືອນເຊັບເທັມເບີ 16, 2022 ໃນເວລາ 09:00 a.m., ຢູ່ທີ່ສານ Thurston County Superior Court, 2000 Lakeridge Dr. SW, Bldg. 3, Olympia, WA 98502, ສານຈະດຳເນີນການຟັງເຣື່ອງເພື່ອຈະພິຈາຣະນາເບິ່ງວ່າການຕົກລົງແກ້ໄຂຄະດີທີ່ຖືກວາງອອກມາຈະຍຸຕິທັມ,ດີພຽງພໍ,ແລະເຫມາະສົມຫລືບໍ່,ແລະຄວນຈະຖືກຮັບຮູ້ສຳລັບການອະນຸມັດຂັ້ນສຸດທ້າຍຫລືບໍ່.ວັນທີແລະເວລາຂອງການຟັງເຣື່ອງອະນຸມັດການຕົກລົງແກ້ໄຂຄະດີຂັ້ນສຸດທ້າຍອາດຈະປ່ຽນແປງໂດຍປາສຈາກການແຈ້ງການຕໍ່ໄປ.ທ່ານຄວນຈະຕິດຕາມເບິ່ງນຳແວບໄຊທ໌ຂອງການຕົກລົງແກ້ໄຂຄະດີໄດ້ທີ່ www.IPWageSettlement.com ສຳລັບຂ່າວຄືບຫນ້າຕ່າງໆຫລືໂທຫາຜູ້ບໍຣິຫານການຕົກລົງແກ້ໄຂຄະດີເລກໂທຟຣີໄດ້ທີ່ເລກ 888-964-0102.

## 22. ຂ້ອຍຈະຕ້ອງໄດ້ເຂົ້າມາໃນການຟັງເຣື່ອງຄວາມເປັນທັມບໍ່?

ບໍ່,ນອກຈາກວ່າທ່ານໄດ້ຄັດຄ້ານການຕົກລົງແກ້ໄຂຄະດີ.ຖ້າຫາກວ່າທ່ານບໍ່ເລືອກທີ່ຈະອອກໄປຈາກການຕົກລົງແກ້ໄຂຄະດີ,ທະນາຍຄວາມຂອງການຟ້ອງຄະດີເປັນກຸ່ມສາມາດເປັນຕົວແທນທ່ານໃນເວລາການຟັງເຣື່ອງ.ທ່ານແມ່ນຍິນດີຕ້ອນຮັບໃຫ້ເຂົ້າມາດ້ວຍຄ່າໃຊ້ຈ່າຍຂອງທ່ານເອງ.ຖ້າຫາກວ່າທ່ານສົ່ງຄຳຄັດຄ້ານມາ,ທ່ານບໍ່ຕ້ອງໄດ້ເຂົ້າມາສານ.ຕາບໃດທີ່ທ່ານໄດ້ສົ່ງໃບໜັງສືຄັດຄ້ານຂອງທ່ານເຂົ້າມາທັນຕາມເວລາ,ສານຈະພິຈາຣະນາເບິ່ງມັນ.ທ່ານອາດຈະຍັງໄດ້ຈ່າຍທະນາຄວາມຂອງທ່ານເອງເພື່ອຈະເຂົ້າຮ່ວມ,ແຕ່ວ່າມັນບໍ່ຈຳເປັນເພື່ອຈະໃຫ້ຄວາມຄັດຄ້ານຂອງທ່ານຈະຖືກພິຈາຣະນາເບິ່ງ.

## 23. ຂ້ອຍຈະເວົ້າໃນການຟັງເຣື່ອງຄວາມເປັນທັມໄດ້ບໍ່?

ຖ້າຫາກວ່າທ່ານຍື່ນຄຳຄັດຄ້ານທັນຕາມເວລາ,ທ່ານຈະຂໍຮ້ອງນຳສານເອົາການອະນຸຍາດໃຫ້ເວົ້າໃນເວລາການຟັງເຣື່ອງຄວາມເປັນທັມ.ເພື່ອຈະເຮັດແນວນັ້ນ,ກະຣຸນາລວມເອົາຄຳເວົ້າ "ຂ້ອຍມີຈຸດປະສົງທີ່ຈະມາປາກົດຕົວຢູ່ໃນການຟັງເຣື່ອງຄວາມເປັນທັມ" ຢູ່ໃນໃບຄັດຄ້ານຂອງທ່ານ.ທ່ານບໍ່ສາມາດເວົ້າໃນເວລາການຟັງເຣື່ອງຖ້າຫາກວ່າທ່ານຍົກເວັ້ນຕົວທ່າງເອງຈາກການຕົກລົງແກ້ໄຂຄະດີ.

# ການຊອກເອົາຣາຍຣະອຽດເພີ້ມເຕີມ

## 24. ມັນມີຣາຍຣະອຽດເພີ້ມເຕີມແນວໃດບໍ່ກ່ຽວກັບການຕົກລົງແກ້ໄຂຄະດີ?

ໃບແຈ້ງການໃບນີ້ຈະສະລູບຄວາມການຕົກລົງແກ້ໄຂຄະດີທີ່ຖືກວາງອອກມາ.ຣາຍຣະອຽດເພີ້ມເຕີມແມ່ນຢູ່ໃນໃບສັນຍາການຕົກລົງແກ້ໄຂຄະດີ,ຊຶ່ງທ່ານສາມາດໄດ້ຮັບໂດຍການໂທຫາເລກ 888-964-0102 ຫລືການແວ່ປ້ຽມ www.IPWageSettlement.com.

## 25. ຂ້ອຍຈະໄດ້ຮັບຣາຍຣະອຽດເພີ້ມເຕີມໄດ້ແນວໃດ?

ທ່ານສາມາດໂທຫາເລກ 888-964-0102; ຂຽນໜັງສືໄປຫາ Settlement Administrator ໄດ້ທີ່:

Liang v. State of WA: IP Wage Settlement
c/o JND Legal Administration
PO Box 91373
Seattle, WA 98111

ຫລືແວ່ເຂົ້າປ້ຽມແວບໄຊທຣ໌ໄດ້ທີ່ www.IPWageSettlement.com, ບ່ອນທີ່ທ່ານຈະຊອກຫາຄຳຕອບຕໍ່ຄຳຖາມທົ່ວໄປກ່ຽວກັບການຕົກລົງແກ້ໄຂຄະດີ,ໃບຟອມການເລືອກອອກ,ລວມທັງຣາຍຣະອຽດທີ່ໃຊ້ການໄດ້ອື່ນໆທີ່ກ່ຽວພັນນຳການຕົກລົງແກ້ໄຂຄະດີ.

## ສະລູບຄວາມຂອງຊົ່ວໂມງທີ່ຖືກກັດແປງຂອງສະວັດດີການຮ່ວມກັນຢູ່ໃນຂໍ້ມູນຂອງກົມ DSHS

ຊົ່ວໂມງທີ່ຖືກກັດແປງຂອງສະວັດດີການຮ່ວມກັນທີ່ຖືກຊີ້ບອກຢູ່ໃນຂໍ້ມູນຂອງກົມ DSHS ເປັນເດືອນແລະປີທີ່ໄດ້ຖືກໃຊ້ເພື່ອຈະຄິດໄລ່ສ່ວນແບ່ງຂອງທ່ານຂອງການຕົກລົງແກ້ໄຂຄະດີແມ່ນຕາມດັ່ງຕໍ່ລົງໄປນີ້:

[ຖືກເອົາໃຫ້ໂດຍຜູ້ບໍລິຫານ]

# ຄຳຮ້ອງຂໍເອົາການຍົກເວັ້ນອອກໄປ

***Liang, et al. v. Wash. State Dep't of Social and Health Servs., Case No. 20-2-02506-34***
**Thurston County Superior Court**

[ລາຍລະອຽດຕິດຕໍ່ຫາຂອງທ່ານ]

**ຖ້າຫາກວ່າລາຍລະອຽດທີ່ຖືກບົ່ງຢູ່ຂ້າງເທິງນີ້ໄດ້ປ່ຽນແປງຫລືບໍ່ຖືກຕ້ອງ,ກະຣຸນາດັດແປງໃຫມ່ລາຍລະອຽດຂອງທ່ານໃສ່ຂ້າງລຸ່ມນີ້:**

ຊື່: ________________________________________

ທີ່ຢູ່ໄປສະນີ: ________________________________________

________________________________________

ໂທຣະສັບ: ________________________________________

**ເອົາທີ່ຢູ່ອີແມລ໌ຂອງທ່ານໃຫ້,ຫລື,ຖ້າຫາກວ່າທ່ານບໍ່ມີທີ່ຢູ່ອີແມລ໌,ຂຽນໃສ່ 'ບໍ່ມີ':**

ທີ່ຢູ່ອີແມລ໌: ________________________________________

ໂດຍການເຊັນຊື່ໃສ່ຂ້າງລຸ່ມນີ້ແລະການສົ່ງໃບຟອມໃບນີ້ຄືນ,ຂ້າພະເຈົ້າເລືອກອອກໄປຈາກການຕົກລົງແກ້ໄຂຄະດີໃນສະວັດດີການຮ່ວມກັນຂອງ IP.

____________________________________ ວັນທີເຊັນຊື່: __________________________
ລາຍເຊັນ

ເພື່ອວ່າຈະຍົກເວັ້ນຕົວທ່ານເອງຈາກການຕົກລົງແກ້ໄຂຄະດີເປັນກຸ່ມໃນຄະດີອັນນີ້,ທ່ານຕ້ອງຂຽນປະກອບ,ເຊັນຊື່,ແລະສົ່ງໃບຟອມໃບນີ້,ຕີກາໄປສະນີບໍ່ກາຍເກີນ ເດືອນຈຸນລາຍ 22, 2022 ໄປທີ່:

Liang v. State of WA: IP Wage Settlement
c/o JND Legal Administration
PO Box 91373
Seattle, WA 98111